# ສຶກສາປັດໄຈທີ່ມີອິດທິພົນຕໍ່ການໃຊ້ເງິນກີບຂອງປະຊາຊົນລາວໃນຂອບເຂດແຂວງໄຊຍະບູລີ

**ຜູ້ຂຽນ: ທອນມີ ແກ້ວກິນນາລີ[1], ສີລິມຸງຄຸນ ຫລວງລາດ, ຈັນສະໄໝ ດາຫລວງ,**
**ອູ່ຄຳ ອຸ່ນໄຕ, ເຄນສະຫວັດ ສຸກສະຫວັນ**
*ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*
[1]***ຜູ້ຮັບຜິດຊອບ:*** *ທອນມີ ແກ້ວກິນນາລີ, ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

ການສຶກສາຫົວຂໍ້ "ສຶກສາປັດໄຈທີ່ມີອິດທິພົນຕໍ່ການໃຊ້ເງິນກີບຂອງປະຊາຊົນລາວໃນຂອບເຂດແຂວງໄຊຍະບູລີ" ມີຈຸດປະສົງໃນການສຶກສາ 2 ຈຸດປະສົງຄື: 1. ເພື່ອສຶກສາຄວາມແຕກຕ່າງຂອງປັດໄຈສ່ວນບຸກຄົນ ທີ່ມີອິດທິພົນຕໍ່ການຕັດສິນໃຈໃຊ້ເງິນກີບຂອງປະຊາຊົນໃນຂອບເຂດແຂວງໄຊຍະບູລີ ແລະ 2. ເພື່ອສຶກສາປັດໄຈຂອງອັດຕາດອກເບັ້ຍ, ອັດຕາແລກປ່ຽນ, ຄວາມເຊື່ອຖື ແລະ ສະພາບຄ່ອງ ທີ່ມີອິດທິພົນຕໍ່ການຕັດສິນໃຈໃຊ້ເງິນກີບຂອງປະຊາຊົນລາວ ໃນຂອບເຂດແຂວງໄຊຍະບູລີ. ວິທີການສຶກສາແມ່ນແບບປະລິມານ ແລະ ຄຸນນະພາບ ໂດຍນ□າໃຊ້ຂໍ້ມູນປະຖົມພູມ ຫຼື ຂໍ້ມູນຂັ້ນໜຶ່ງ ໂດຍນຳໃຊ້ແບບສອບຖາມໃນການເກັບກຳຂໍ້ມູນຈາກກຸ່ມຕົວຢ່າງທັງໝົດຈຳນວນ 267 ຄົນ ແລະ ນຳໃຊ້ເຄື່ອງມືທາງດ້ານສະຖິຕິໃນການວິເຄາະຂໍ້ມູນເປັນຕົ້ນແມ່ນ: ສະຖິຕິພັນລະນາ (Descriptive Statistic), ການທົດສອບສົມມຸດຖານຄວາມແຕກຕ່າງຂອງກຸ່ມຕົວຢ່າງ ດ້ວຍຄ່າທາງສະຖິຕິ F-Test (One way ANOVA) ແລະ T-Test (Independent Samples t-Tests).

ຜົນການສຶກສາພົບວ່າ ການທົດສອບສົມມຸດຖານ ດ້ານເພດ, ສະຖານະພາບ, ອາຍຸ, ລະດັບການສຶກສາ ແລະ ລາຍໄດ້ ທີ່ແຕກຕ່າງກັນມີຜົນກະທົບຕໍ່ການນຳໃຊ້ເງິນກີບຂອງປະຊາຊົນໃນເຂດແຂວງໄຊຍະບູລີ ທີ່ແຕກຕ່າງກັນ ໃນລະດັບຄ່າ P-Value ຫຼາຍກວ່າ 0.05 ຜົນການວິເຄາະຈຶ່ງບໍ່ສອດຄ່ອງ (ປະຕິເສດ) ກັບສົມມຸດຖານທີ່ກຳນົດໄວ້. ໃນຂະນະທີ່ປັດໃຈດ້ານອາຊີບ ທີ່ແຕກຕ່າງກັນ ມີຜົນກະທົບຕໍ່ການນຳໃຊ້ເງິນກີບຂອງປະຊາຊົນໃນເຂດແຂວງໄຊຍະບູລີທີ່ບໍ່ແຕກຕ່າງກັນ ໂດຍມີຄ່າ P-Value ນ້ອຍກວ່າ 0.05 ຜົນການວິເຄາະຈຶ່ງສອດຄ່ອງ (ຍອມຮັບ) ສົມມຸດຖານທີ່ກຳນົດໄວ້.

ສຳລັບປັດໄຈທີ່ມີຜົນກະທົບຕໍ່ການນຳໃຊ້ເງິນກີບໂດຍສະເພາະ ປັດໄຈດ້ານອັດຕາດອກເບ້ຍ ມີຄ່າສະເລ່ຍ 1.71 ຈັດຢູ່ໃນລະດັບເຫັນດີໜ້ອຍທີ່ສຸດ. ປັດໄຈດ້ານອັດຕາແລກປ່ຽນ ມີຄ່າສະເລ່ຍ 1.70 ຈັດຢູ່ໃນລະດັບເຫັນດີໜ້ອຍທີ່ສຸດ. ປັດໄຈດ້ານຄວາມເຊື່ອຖື ມີຄ່າສະເລ່ຍ 3.82 ຈັດຢູ່ໃນລະດັບເຫັນດີຫຼາຍ ແລະ ປັດໄຈດ້ານສະພາບຄ່ອງ ກຸ່ມຕົວຢ່າງສ່ວນຫຼາຍມີຄວາມຄິດເຫັນໂດຍລວມມີຄ່າສະເລ່ຍ 2.79 ຈັດຢູ່ໃນລະດັບເຫັນດີປານກາງ.

**ຄຳສັບສຳຄັນ:** ການນຳໃຊ້ເງິນກີບ, ຄວາມຕ້ອງການຖືເງິນ, ອັດຕາດອກເບ້ຍ, ອັດຕາແລກປ່ຽນ.

# Study on Factors Influence the Decision-Making of People Using Lao Kip Currency Within Xayyabouly Province

The research "Study the factors that influence the use of KIP by Lao people in Xayyabouly province" There are two objectives in the study: 1. Study the situation of people's use of kip money in the province. And 2. study the differences in personal factors that influence the decision to use kip of Lao people in Xayyabouly province., the KIP, in the province as well. The research is designed as quantitative and qualitative analysis, and the research analytical framework is derived from relevant theory and the previous studies. The questionnaire was applied to gather primary data from the sample group of 267 people in the province. The descriptive statistics and hypothesis test were implied to be analyzed as F-Tests (one-way ANOVA) and T-Tests (independent sample t-tests).

The research findings revealed that the hypothesis test: gender, status, age, education level, and income have various effects on the use of kip by people in Xayyabouly province, which are different at the level of statistical expectation of P-value larger than 0.05 and reject H1. Only the different occupations influence the use of kip by people in not different areas of Xayaburi Province, and the analysis results are consistent (accepted) with the set hypothesis of a P-value less than 0.05.

Whereas the factors that affect the use of KIP, especially the interest rate factor, has an average value of 1.71, which is the least agreeable level. The exchange rate factor has an average value of 1.70, which is at the least agreeable level. The reliability factor has an average value of 3.82, and the liquidity factor has an overall opinion with an average value of 2.79, which is in the medium agreement level.

**Keywords:** Utilization of KIP, Demand for money, Interest rate and Exchange rate.